# Wellcare By Allwell
# ແຈ້ງການກ່ຽວກັບຫຼັກປະຕິບັດຄວາມເປັນສ່ວນຕົວ

**ແຈ້ງການດັ່ງກ່າວນີ້ອະທິບາຍເຖິງວິທີການທີ່ຂໍ້ມູນທາງການແພດກ່ຽວກັບທ່ານສາມາດຖືກນຳໃຊ້ ແລະ ເປີດເຜີຍ, ພ້ອມກັບວິທີການທີ່ທ່ານສາມາດເຂົ້າເຖິງຂໍ້ມູນດັ່ງກ່າວ.**
*ກະລຸນາກວດເບິ່ງຢ່າງລະອຽດ.*

**ມີຜົນບັງຄັບໃຊ້ໃນວັນທີ 10/1/2024**

ສຳລັບການຊ່ວຍເຫຼືອໃນການແປພາສາ ຫຼື ເພື່ອໃຫ້ເຂົ້າໃຈສິ່ງດັ່ງກ່າວ, ກະລຸນາໂທຫາ **1-844-796-6811** (TTY: **711**).

Si necesita ayuda para traducir o entender este texto, llame al **1-844-796-6811** (TTY: **711**).

## ໜ້າທີ່ຂອງຫົວໜ່ວຍທຸລະກິດທີ່ໄດ້ຮັບຄວາມຄຸ້ມຄອງ:

Wellcare By Allwell ແມ່ນຫົວໜ່ວຍທຸລະກິດທີ່ໄດ້ຮັບການຄຸ້ມຄອງຕາມທີ່ກຳນົດ ແລະ ຄວບຄຸມພາຍໃຕ້ກົດໝາຍວ່າດ້ວຍການເຄື່ອນຍ້າຍ ແລະ ຄວາມຮັບຜິດຊອບໃນການປະກັນສຸຂະພາບ ປີ 1996 (HIPAA). Wellcare By Allwell ແມ່ນມີຄວາມຈຳເປັນໂດຍກົດໝາຍເພື່ອຮັກສາຄວາມເປັນສ່ວນຕົວຂອງຂໍ້ມູນສຸຂະພາບທີ່ໄດ້ຮັບການປົກປ້ອງຄຸ້ມຄອງ (PHI) ຂອງທ່ານ, ມີແຈ້ງການດັ່ງກ່າວນີ້ໃຫ້ທ່ານຮັບຊາບເຖິງໜ້າທີ່ທາງກົດໝາຍ ແລະ ການປະຕິບັດຄວາມເປັນສ່ວນຕົວຂອງພວກເຮົາທີ່ກ່ຽວຂ້ອງກັບຂໍ້ມູນ PHI ຂອງທ່ານ, ປະຕິບັດຕາມຂໍ້ກຳນົດຂອງແຈ້ງການທີ່ມີຜົນບັງຄັບໃຊ້ໃນປະຈຸບັນ ແລະ ແຈ້ງໃຫ້ທ່ານຊາບໃນກໍລະນີທີ່ PHI ຂອງທ່ານໄດ້ຮັບການລະເມີດທີ່ບໍ່ປອດໄພ.

ແຈ້ງການດັ່ງກ່າວນີ້ອະທິບາຍເຖິງວິທີການທີ່ພວກເຮົາສາມາດນຳໃຊ້ ແລະ ເປີດເຜີຍຂໍ້ມູນ PHI ຂອງທ່ານ. ເຊິ່ງຍັງອະທິບາຍເຖິງສິດທິຂອງທ່ານໃນການເຂົ້າເຖິງ, ປັບປຸງ ແລະ ຄຸ້ມຄອງຂໍ້ມູນ PHI ຂອງທ່ານ ແລະ ວິທີການໃຊ້ສິດທິເຫຼົ່ານັ້ນອີກດ້ວຍ. ການນຳໃຊ້ ແລະ ການເປີດເຜີຍອື່ນໆທັງໝົດຂອງຂໍ້ມູນ PHI ຂອງທ່ານທີ່ບໍ່ໄດ້ຖືກອະທິບາຍໄວ້ໃນແຈ້ງການສະບັບນີ້ຈະຖືກດຳເນີນການສະເພາະເມື່ອໄດ້ຮັບການອະນຸຍາດທີ່ເປັນລາຍລັກອັກສອນຈາກທ່ານເທົ່ານັ້ນ.

Wellcare By Allwell ຂໍສະຫງວນລິຂະສິດໃນການປ່ຽນແປງແຈ້ງການສະບັບນີ້. ພວກເຮົາຂໍສະຫງວນສິດໃນການດຳເນີນການດັດແກ້ ຫຼື ປ່ຽນແປງແຈ້ງການໃຫ້ມີຜົນບັງຄັບໃຊ້ສຳລັບຂໍ້ມູນ PHI ຂອງທ່ານທີ່ພວກເຮົາມີຢູ່ ພ້ອມທັງຂໍ້ມູນ PHI ຂອງທ່ານທີ່ພວກເຮົາຈະໄດ້ຮັບໃນອະນາຄົດ. Wellcare By Allwell ຈະທົບທວນຄືນ ແລະ ແຈກຢາຍແຈ້ງການສະບັບນີ້ນີ້ໂດຍທັນທີເມື່ອໃດທີ່ມີການປ່ຽນແປງທີ່ສຳຄັນດັ່ງຕໍ່ໄປນີ້:

- ການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນ.
- ສິດທິຂອງທ່ານ.
- ໜ້າທີ່ທາງກົດໝາຍຂອງພວກເຮົາ.
- ການປະຕິບັດຄວາມເປັນສ່ວນຕົວອື່ນໆທີ່ໄດ້ລະບຸໄວ້ໃນແຈ້ງການ.

ທຸກການແຈ້ງການທີ່ໄດ້ຮັບການແກ້ໄຂຈະມີການເຜີຍແຜ່ຢູ່ໃນເວັບໄຊຂອງພວກເຮົາ ຫຼື ຜ່ານທາງການສົ່ງທາງຈົດໝາຍທີ່ແຍກຕ່າງຫາກ.

## ການປົກປ້ອງພາຍໃນຂອງຂໍ້ມູນ PHI ໃນທາງວາຈາ, ທາງລາຍລັກອັກສອນ ແລະ ທາງເອເລັກໂຕຣນິກ:

Wellcare By Allwell ຈະປົກປ້ອງຂໍ້ມູນ PHI ຂອງທ່ານ. ພວກເຮົາຍັງມີຄວາມມຸ້ງໝັ້ນທີ່ຈະຮັກສາຂໍ້ມູນກ່ຽວກັບເຊື້ອຊາດ, ຊົນເຜົ່າ ແລະ ພາສາ (REL), ພ້ອມກັບລັດສະນິຍົມທາງເພດ ແລະ ຄວາມເປັນເອກະລັກທາງເພດ (SOGI) ຂອງທ່ານໄວ້ເປັນຄວາມລັບ. ພວກເຮົາມີຂັ້ນຕອນຄວາມເປັນສ່ວນຕົວ ແລະ ຄວາມປອດໄພເພື່ອການຊ່ວຍເຫຼືອ.


©Wellcare 2024

ເຫຼົ່ານີ້ແມ່ນບາງວິທີທີ່ພວກເຮົາປົກປ້ອງຂໍ້ມູນ PHI ຂອງທ່ານ:

- ພວກເຮົາມີການຝຶກອົບຮົມພະນັກງານຂອງຕົນເພື່ອປະຕິບັດຕາມຂັ້ນຕອນຄວາມເປັນສ່ວນຕົວ ແລະ ຄວາມປອດໄພຂອງພວກເຮົາ.
- ພວກເຮົາມີຄວາມຕ້ອງການໃຫ້ຜູ້ຮ່ວມທຸລະກິດຂອງພວກເຮົາປະຕິບັດຕາມຂັ້ນຕອນຄວາມເປັນສ່ວນຕົວ ແລະ ຄວາມປອດໄພ.
- ພວກເຮົາຮັກສາສຳນັກງານຂອງຕົນໃຫ້ປອດໄພ.
- ພວກເຮົາເວົ້າກ່ຽວກັບຂໍ້ມູນ PHI ຂອງທ່ານສະເພາະພຽງແຕ່ກັບຄົນທີ່ຕ້ອງການຮູ້ເພື່ອເຫດຜົນທາງທຸລະກິດເທົ່ານັ້ນ.
- ພວກເຮົາຮັກສາຂໍ້ມູນ PHI ຂອງທ່ານໃຫ້ປອດໄພເມື່ອພວກເຮົາສົ່ງ ຫຼື ເກັບຮັກສາຂໍ້ມູນດັ່ງກ່າວທາງເອເລັກໂຕຣນິກ.
- ພວກເຮົາໃຊ້ເຕັກໂນໂລຢີເພື່ອສະກັດກັ້ນບຸກຄົນທີ່ບໍ່ຫວັງດີທີ່ຫວັງຈະເຂົ້າເຖິງຂໍ້ມູນ PHI ຂອງທ່ານ.

## ການນຳໃຊ້ ແລະ ການເປີດເຜີຍຂໍ້ມູນ PHI ຂອງທ່ານທີ່ໄດ້ຮັບອະນຸຍາດ:

ຕໍ່ໄປນີ້ແມ່ນລາຍການຂອງວິທີການທີ່ພວກເຮົາອາດນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ໄດ້ຮັບການອະນຸມັດຈາກທ່ານ:

- ***ການປິ່ນປົວຮັກສາ*** - ພວກເຮົາອາດຈະນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ທ່ານໝໍ ຫຼື ຜູ້ໃຫ້ບໍລິການດ້ານສຸຂະພາບອື່ນໆທີ່ໃຫ້ການປິ່ນປົວຮັກສາທ່ານ, ເພື່ອປະສານການປິ່ນປົວຮັກສາຂອງທ່ານໃນບັນດາຜູ້ໃຫ້ບໍລິການ ຫຼື ເພື່ອຊ່ວຍພວກເຮົາໃນການຕັດສິນໃຈຕໍ່ການອະນຸມັດລ່ວງໜ້າທີ່ກ່ຽວຂ້ອງກັບຜົນປະໂຫຍດຂອງທ່ານ.
- ***ການຊຳລະເງິນ*** - ພວກເຮົາອາດຈະນຳໃຊ້ ແລະ ເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອຊຳລະເງິນຜົນປະໂຫຍດສຳລັບບໍລິການດູແລຮັກສາສຸຂະພາບທີ່ສະໜອງໃຫ້ແກ່ທ່ານ. ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ແຜນສຸຂະພາບອື່ນ, ແກ່ຜູ້ໃຫ້ບໍລິການດ້ານສຸຂະພາບ ຫຼື ຫົວໜ່ວຍທຸລະກິດອື່ນໆທີ່ຢູ່ພາຍໃຕ້ກົດລະບຽບຄວາມເປັນສ່ວນຕົວຂອງລັດຖະບານກາງເພື່ອຈຸດປະສົງໃນການຊຳລະເງິນຂອງພວກເຂົາ. ກິດຈະກຳການຊຳລະເງິນອາດຈະປະກອບມີການປະມວນຜົນການຮຽກຮ້ອງ, ກຳນົດຄຸນນະສົມບັດ ຫຼື ຄວາມຄຸ້ມຄອງສຳລັບການຮຽກຮ້ອງ ແລະ ການທົບທວນຄືນບໍລິການສຳລັບຄວາມຈຳເປັນທາງການແພດ.
- ***ການປະຕິບັດການດ້ານການດູແລຮັກສາສຸຂະພາບ*** - ພວກເຮົາອາດຈະນຳໃຊ້ ແລະ ເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອການປະຕິບັດການດ້ານການດູແລຮັກສາສຸຂະພາບຂອງພວກເຮົາ. ກິດຈະກຳເຫຼົ່ານີ້ອາດຈະປະກອບມີການໃຫ້ບໍລິການລູກຄ້າ, ການຕອບສະໜອງຕໍ່ການຮ້ອງທຸກ ແລະ ການອຸທອນ, ພ້ອມທັງການໃຫ້ການຄຸ້ມຄອງການດູແລຮັກສາ ແລະ ການປະສານງານດ້ານການດູແລຮັກສາ.

  ໃນການປະຕິບັດການດ້ານການດູແລຮັກສາສຸຂະພາບຂອງພວກເຮົານັ້ນອາດຈະມີການເປີດເຜີຍຂໍ້ມູນ PHI ໃຫ້ກັບຜູ້ຮ່ວມທຸລະກິດ. ພວກເຮົາຈະມີຂໍ້ຕົກລົງເປັນລາຍລັກອັກສອນເພື່ອປົກປ້ອງຄວາມເປັນສ່ວນຕົວຂອງຂໍ້ມູນ PHI ຂອງທ່ານກັບຜູ້ຮ່ວມທຸລະກິດທີ່ກ່ຽວຂ້ອງເຫຼົ່ານີ້. ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ຫົວໜ່ວຍທຸລະກິດອື່ນທີ່ຢູ່ພາຍໃຕ້ກົດລະບຽບຄວາມເປັນສ່ວນຕົວຂອງລັດຖະບານກາງ. ຫົວໜ່ວຍທຸລະກິດຍັງຕ້ອງມີສາຍພົວພັນກັບທ່ານສຳລັບການດຳເນີນງານດ້ານການປະຕິບັດການດ້ານການດູແລຮັກສາສຸຂະພາບຂອງພວກເຂົາອີກດ້ວຍ. ໃນນີ້ປະກອບມີ:

  - ການປະເມີນຄຸນນະພາບ ແລະ ບັນດາກິດຈະກຳການປັບປຸງຕ່າງໆ.
  - ການທົບທວນຄືນຄວາມສາມາດ ຫຼື ຄຸນສົມບັດຂອງຜູ້ຊ່ຽວຊານດ້ານການດູແລຮັກສາສຸຂະພາບ.
  - ການຄຸ້ມຄອງກໍລະນີ ແລະ ການປະສານງານດ້ານການດູແລຮັກສາ.
  - ການກວດຈັບ ຫຼື ການປ້ອງກັນການສໍ້ໂກງ ແລະ ການລ່ວງລະເມີດທາງດ້ານການດູແລຮັກສາສຸຂະພາບ.

  ເຊື້ອຊາດ, ຊົນເຜົ່າ, ພາສາ, ລົດສະນິຍົມທາງເພດ ແລະ ຄວາມເປັນເອກະລັກທາງເພດຂອງທ່ານຈະຖືກປົກປ້ອງໂດຍລະບົບ ແລະ ກົດໝາຍຂອງແຜນສຸຂະພາບ. ໝາຍຄວາມວ່າຂໍ້ມູນທີ່ທ່ານໃຫ້ມານັ້ນແມ່ນເປັນສ່ວນຕົວ ແລະ ປອດໄພ. ພວກເຮົາອາດຈະແບ່ງປັນຂໍ້ມູນນີ້ກັບຜູ້ໃຫ້ການດູແລຮັກສາສຸຂະພາບເທົ່ານັ້ນ. ຂໍ້ມູນຈະບໍ່ຖືກແບ່ງປັນກັບຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດ ຫຼື ອະນຸມັດຈາກທ່ານ. ພວກເຮົາຈະນຳໃຊ້ຂໍ້ມູນດັ່ງກ່າວນີ້ເພື່ອຊ່ວຍປັບປຸງຄຸນນະພາບຂອງການດູແລຮັກສາ ແລະ ບໍລິການຂອງທ່ານ.

ຂໍ້ມູນນີ້ຊ່ວຍໃຫ້ພວກເຮົາເພື່ອ:

- ເຂົ້າໃຈຄວາມຕ້ອງການດ້ານສຸຂະພາບຂອງທ່ານໄດ້ດີຂຶ້ນ.
- ຮັບຮູ້ຄວາມຕ້ອງການທາງພາສາຂອງທ່ານເມື່ອທ່ານໄປພົບຜູ້ໃຫ້ບໍລິການດ້ານສຸຂະພາບ.
- ໃຫ້ຂໍ້ມູນການດູແລຮັກສາສຸຂະພາບເພື່ອຕອບສະໜອງຄວາມຕ້ອງການໃນການດູແລຮັກສາຂອງທ່ານ.
- ສະເໜີແຜນງານໂປແກຣມເພື່ອຊ່ວຍໃຫ້ທ່ານມີສຸຂະພາບແຂງແຮງທີ່ສຸດ.

ຂໍ້ມູນນີ້ຈະບໍ່ຖືກນຳໃຊ້ເພື່ອຈຸດປະສົງການຄໍ້າປະກັນ ຫຼື ເພື່ອການຕັດສິນໃຈວ່າທ່ານສາມາດຮັບເອົາຄວາມຄຸ້ມຄອງ ຫຼື ບໍລິການໄດ້ຫຼືບໍ່.

- ***ແຜນສຸຂະພາບກຸ່ມ/ການເປີດເຜີຍຂໍ້ມູນຕໍ່ຜູ້ສະໜັບສະໜູນແຜນ*** - ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ຜູ້ສະໜັບສະໜູນແຜນສຸຂະພາບກຸ່ມ, ເຊັ່ນວ່ານາຍຈ້າງ ຫຼື ຫົວໜ່ວຍທຸລະກິດອື່ນໆທີ່ພວມສະໜອງໂປແກຣມການດູແລຮັກສາສຸຂະພາບໃຫ້ແກ່ທ່ານຢູ່, ຖ້າຜູ້ສະໜັບສະໜູນໄດ້ຕົກລົງຕໍ່ກັບຂໍ້ຈຳກັດບາງຢ່າງກ່ຽວກັບວິທີການທີ່ພວກເຂົາຈະນຳໃຊ້ ຫຼື ເປີດເຜີຍຂໍ້ມູນສຸຂະພາບທີ່ໄດ້ຮັບການປົກປ້ອງຄຸ້ມຄອງ (ເຊັ່ນ ການຕົກລົງເຫັນດີທີ່ຈະບໍ່ນຳໃຊ້ຂໍ້ມູນສຸຂະພາບທີ່ໄດ້ຮັບການປົກປ້ອງຄຸ້ມຄອງເພື່ອການກະທຳ ຫຼື ການຕັດສິນໃຈທີ່ກ່ຽວຂ້ອງກັບການຈ້າງງານ).

## ການເປີດເຜີຍຂໍ້ມູນ PHI ອື່ນໆຂອງທ່ານທີ່ໄດ້ຮັບອະນຸຍາດ ຫຼື ທີ່ມີຄວາມຈຳເປັນ:

- ***ກິດຈະກຳການລະດົມທຶນ*** - ພວກເຮົາອາດຈະນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານເຂົ້າໃນກິດຈະກຳການລະດົມທຶນ, ເຊັ່ນ: ການລະດົມທຶນເພື່ອມູນນິທິການກຸສົນ ຫຼື ຫົວໜ່ວຍທຸລະກິດທີ່ຄ້າຍຄຽງເພື່ອຊ່ວຍໃນດ້ານການລະດົມທຶນສຳລັບກິດຈະກຳຂອງເຂົາເຈົ້າ. ຖ້າພວກເຮົາຕິດຕໍ່ຫາທ່ານເພື່ອການເຄື່ອນໄຫວໃນກິດຈະກຳການລະດົມທຶນນັ້ນ, ພວກເຮົາຈະໃຫ້ໂອກາດແກ່ທ່ານໃນການຍົກເລີກ ຫຼື ຢຸດການຮັບການສື່ສານດັ່ງກ່າວໃນອະນາຄົດ.
- ***ຈຸດປະສົງການຄໍ້າປະກັນ*** - ພວກເຮົາອາດຈະນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອຈຸດປະສົງການຄໍ້າປະກັນ, ເຊັ່ນ: ການຕັດສິນໃຈກ່ຽວກັບການສະໝັກ ຫຼື ຄຳຮ້ອງຂໍຄວາມຄຸ້ມຄອງ. ຖ້າພວກເຮົານຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອຈຸດປະສົງການຄໍ້າປະກັນນັ້ນ, ພວກເຮົາຈະຖືກຫ້າມບໍ່ໃຫ້ນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານທີ່ເປັນຂໍ້ມູນທາງພັນທຸກຳໃນຂະບວນການຄໍ້າປະກັນ.
- ***ການເຕືອນການນັດໝາຍ/ທາງເລືອກການປິ່ນປົວຮັກສາ*** - ພວກເຮົາອາດຈະນຳໃຊ້ ແລະ ເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອເຕືອນທ່ານກ່ຽວກັບການນັດໝາຍສຳລັບການປິ່ນປົວຮັກສາ ແລະ ການດູແລທາງການແພດກັບພວກເຮົາ ຫຼື ເພື່ອສະໜອງຂໍ້ມູນໃຫ້ທ່ານກ່ຽວກັບທາງເລືອກການປິ່ນປົວຮັກສາ ຫຼື ຜົນປະໂຫຍດ ແລະ ບໍລິການທີ່ກ່ຽວຂ້ອງກັບສຸຂະພາບອື່ນໆ, ເຊັ່ນ ຂໍ້ມູນກ່ຽວກັບວິທີການຢຸດສູບຢາ ຫຼື ການຫຼຸດນໍ້າໜັກ.
- ***ຕາມກົດໝາຍກຳນົດ*** - ຖ້າກົດໝາຍທີ່ລັດຖະບານກາງ, ລັດ ແລະ/ຫຼື ທ້ອງຖິ່ນຮຽກຮ້ອງໃຫ້ມີການນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານ, ພວກເຮົາອາດຈະນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ນັ້ນໆຂອງທ່ານໃນຂອບເຂດທີ່ການນຳໃຊ້ ຫຼື ການເປີດເຜີຍໂດຍສອດຄ່ອງກັບກົດໝາຍດັ່ງກ່າວ ແລະ ຈຳກັດຕາມຂໍ້ກຳນົດຂອງກົດໝາຍດັ່ງກ່າວ. ຖ້າມີກົດໝາຍ ຫຼື ລະບຽບການເຖິງສອງຂໍ້ຂຶ້ນໄປທີ່ຄຸ້ມຄອງການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນດຽວກັນມີຄວາມຂັດແຍ້ງກັນ, ພວກເຮົາຈະປະຕິບັດຕາມກົດໝາຍ ຫຼື ລະບຽບການທີ່ຈຳກັດເຂັ້ມງວດຍິ່ງຂຶ້ນກວ່າເກົ່າ.
- ***ກິດຈະກຳສາທາລະນະສຸກ*** - ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ເຈົ້າໜ້າທີ່ສາທາລະນະສຸກເພື່ອຈຸດປະສົງໃນການປ້ອງກັນ ຫຼື ຄວບຄຸມພະຍາດ, ການບາດເຈັບ ຫຼື ຄວາມພິການ. ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ອົງການອາຫານ ແລະ ຢາ (FDA) ເພື່ອຮັບປະກັນຄຸນນະພາບ, ຄວາມປອດໄພ ຫຼື ປະສິດທິພາບຂອງຜະລິດຕະພັນ ຫຼື ບໍລິການທີ່ຢູ່ພາຍໃຕ້ເຂດອຳນາດຂອງ FDA.
- ***ຜູ້ຕົກເປັນເຫຍື່ອຂອງການລ່ວງລະເມີດ ແລະ ການປ່ອຍປະລະເລີຍ*** - ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ, ລັດ ຫຼື ລັດຖະບານກາງ, ລວມທັງບໍລິການສັງຄົມ ຫຼື ໜ່ວຍງານບໍລິການປົກປ້ອງຄຸ້ມຄອງທີ່ໄດ້ຮັບອະນຸຍາດທາງກົດໝາຍໃຫ້ຮັບເອົາບົດລາຍງານດັ່ງກ່າວ ຖ້າພວກເຮົາມີຄວາມເຊື່ອທີ່ສົມເຫດສົມຜົນກ່ຽວກັບການລ່ວງລະເມີດ, ການລະເລີຍ ຫຼື ຄວາມຮຸນແຮງພາຍໃນຄອບຄົວ.

- ***ຂະບວນການທາງຕຸລາການ ແລະ ການບໍລິຫານ*** - ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອຕອບສະໜອງຕໍ່ຄໍາສັ່ງທາງດ້ານການບໍລິຫານປົກຄອງ ຫຼື ສານ. ພວກເຮົາຍັງອາດຈະຖືກຮຽກຮ້ອງໃຫ້ເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອຕອບສະໜອງຕໍ່ໝາຍສານ, ຄໍາຮ້ອງຂໍຄົ້ນ ຫຼື ການຮ້ອງຂໍທີ່ຄ້າຍຄືກັນອື່ນໆ.
- ***ໜ່ວຍງານບັງຄັບໃຊ້ກົດໝາຍ*** - ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ທີ່ກ່ຽວຂ້ອງຂອງທ່ານໃຫ້ແກ່ໜ່ວຍງານບັງຄັບໃຊ້ກົດໝາຍເມື່ອມີຄວາມຈໍາເປັນເພື່ອຈຸດປະສົງໃນການຕອບໂຕ້ຕໍ່ອາຊະຍາກໍາ.
- ***ເຈົ້າໜ້າທີ່ສັນນະສູດຊົບ, ແພດສອບສວນ ແລະ ຜູ້ດໍາເນີນການຈັດພິທີງານຊົບ*** - ພວກເຮົາອາດຈະເປີດເຜີຍ PHI ຂອງທ່ານໃຫ້ແກ່ເຈົ້າໜ້າທີ່ສັນນະສູດຊົບ ຫຼື ແພດສອບສວນ. ເຊິ່ງສິ່ງດັ່ງກ່າວອາດຈະຈໍາເປັນ, ເຊັ່ນ ເພື່ອກໍານົດສາເຫດຂອງການເສຍຊີວິດ. ຖ້າມີຄວາມຈໍາເປັນພວກເຮົາຍັງອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ຜູ້ດໍາເນີນການຈັດພິທີງານຊົບ ເພື່ອປະຕິບັດໜ້າທີ່ຂອງພວກເຂົາອີກດ້ວຍ.
- ***ການບໍລິຈາກອະໄວຍະວະ, ດວງຕາ ແລະ ເນື້ອເຍື່ອ*** - ພວກເຮົາອາດຈະເປີດເຜີຍ PHI ຂອງທ່ານໃຫ້ແກ່ອົງການຈັດຊື້ອະໄວຍະວະ. ພວກເຮົາຍັງອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ກັບຜູ້ທີ່ເຮັດວຽກໃນການຈັດຊື້, ການທະນາຄານ ຫຼື ການປູກຖ່າຍອະໄວຍະວະ, ດວງຕາ ແລະ ເນື້ອເຍື່ອຈາກຮ່າງກາຍອີກດ້ວຍ.
- ***ໄພຂົ່ມຂູ່ຕໍ່ສຸຂະພາບ ແລະ ຄວາມປອດໄພ*** - ພວກເຮົາອາດຈະນໍາໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານ ຖ້າພວກເຮົາເຊື່ອດ້ວຍຄວາມສຸດຈະລິດໃຈວ່າການນໍາໃຊ້ ຫຼື ການເປີດເຜີຍແມ່ນມີຄວາມຈໍາເປັນເພື່ອປ້ອງກັນ ຫຼື ຫຼຸດຜ່ອນໄພຂົ່ມຂູ່ທີ່ຮ້າຍແຮງ ຫຼື ໃກ້ຈະເກີດຂຶ້ນຕໍ່ສຸຂະພາບ ຫຼື ຄວາມປອດໄພຂອງບຸກຄົນ ຫຼື ສາທາລະນະ.
- ***ໜ້າທີ່ຂອງລັດຖະບານຊໍານານພິເສດສະເພາະທາງ*** - ຖ້າທ່ານເປັນສະມາຊິກຂອງກອງທັບສະຫະລັດ, ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານຕາມທີ່ເຈົ້າໜ້າທີ່ບັງຄັບບັນຊາທາງທະຫານກໍານົດ. ພວກເຮົາຍັງອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ເຈົ້າໜ້າທີ່ລັດຖະບານກາງທີ່ໄດ້ຮັບອະນຸຍາດ ຖ້າໃນກໍລະນີທີ່ກ່ຽວຂ້ອງກັບຂໍ້ກັງວົນດ້ານຄວາມປອດໄພແຫ່ງຊາດ, ກິດຈະກໍາສືບລັບ, ກະຊວງການຕ່າງປະເທດເພື່ອການພິຈາລະນາຄວາມເໝາະສົມທາງດ້ານການແພດ, ການປົກປ້ອງຄຸ້ມຄອງປະທານປະເທດ ແລະ ບຸກຄົນອື່ນໆທີ່ໄດ້ຮັບອະນຸຍາດຕາມທີ່ກົດໝາຍກໍານົດອີກດ້ວຍ.
- ***ຄ່າຊົດເຊີຍຂອງແຮງງານ*** - ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງກັບຄ່າຊົດເຊີຍຂອງແຮງງານ ຫຼື ໂຄງການທີ່ຄ້າຍຄືກັນອື່ນໆ ທີ່ໄດ້ຈັດຕັ້ງຂຶ້ນໂດຍກົດໝາຍ, ເຊິ່ງໃຫ້ຜົນປະໂຫຍດສໍາລັບການບາດເຈັບ ຫຼື ການເຈັບເປັນທີ່ກ່ຽວຂ້ອງກັບວຽກງານໂດຍບໍ່ຄໍານຶງເຖິງຄວາມຜິດພາດ.
- ***ສະຖານະການສຸກເສີນ*** - ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານຖ້າເກີດສະຖານະການສຸກເສີນ ຫຼື ຖ້າທ່ານຂາດຄວາມສາມາດ ຫຼື ທ່ານບໍ່ໄດ້ຢູ່ບ່ອນນັ້ນ ໃຫ້ແກ່ສະມາຊິກໃນຄອບຄົວ, ໝູ່ເພື່ອນໃກ້ຊິດ, ໜ່ວຍງານຊ່ວຍເຫຼືອບັນເທົາທຸກດ້ານໄພພິບັດທີ່ໄດ້ຮັບອະນຸຍາດ ຫຼື ບຸກຄົນອື່ນໆທີ່ທ່ານໄດ້ກໍານົດໄວ້ໃນກ່ອນໜ້ານັ້ນ. ພວກເຮົາຈະໃຊ້ການຕັດສິນໃຈ ແລະ ປະສົບການແບບມືອາຊີບເພື່ອກໍານົດວ່າການເປີດເຜີຍນັ້ນໆແມ່ນເປັນປະໂຫຍດທີ່ດີທີ່ສຸດໃຫ້ແກ່ທ່ານແລ້ວຫຼືບໍ່. ຖ້າການເປີດເຜີຍດັ່ງກ່າວເປັນປະໂຫຍດສູງສຸດໃຫ້ແກ່ທ່ານ, ພວກເຮົາຈະເປີດເຜີຍພຽງແຕ່ຂໍ້ມູນ PHI ທີ່ກ່ຽວຂ້ອງໂດຍກົງກັບການມີສ່ວນຮ່ວມຂອງບຸກຄົນນັ້ນໃນການດູແລຂອງທ່ານໂດຍກົງເທົ່ານັ້ນ.
- ***ນັກໂທດ*** - ຖ້າທ່ານເປັນນັກໂທດຂອງສະຖານກັກຂັງ ຫຼື ຢູ່ພາຍໃຕ້ການຄຸມຂັງຂອງເຈົ້າໜ້າທີ່ທີ່ບັງຄັບໃຊ້ກົດໝາຍ, ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ສະຖານກັກຂັງ ຫຼື ເຈົ້າໜ້າທີ່ທີ່ບັງຄັບໃຊ້ກົດໝາຍ, ບ່ອນທີ່ຂໍ້ມູນດັ່ງກ່າວແມ່ນມີຄວາມຈໍາເປັນເພື່ອໃຫ້ສະຖານກັກຂັງນັ້ນໆສະໜອງການດູແລຮັກສາສຸຂະພາບແກ່ທ່ານ; ເພື່ອປົກປ້ອງຄຸ້ມຄອງສຸຂະພາບ ຫຼື ຄວາມປອດໄພຂອງທ່ານ; ຫຼື ສຸຂະພາບ ຫຼື ຄວາມປອດໄພຂອງບຸກຄົນອື່ນ; ຫຼື ເພື່ອຄວາມປອດໄພ ແລະ ຄວາມໝັ້ນຄົງຂອງສະຖານກັກຂັງນັ້ນໆ.
- ***ການຄົ້ນຄ້ວາວິໄຈ*** - ພາຍໃຕ້ສະຖານະການບາງຢ່າງ ພວກເຮົາອາດຈະເປີດເຜີຍຂໍ້ມູນ PHI ຂອງທ່ານໃຫ້ແກ່ນັກຄົ້ນຄວ້າວິໄຈໃນເມື່ອທີ່ການສຶກສາຄົ້ນຄ້ວາທາງຄລີນິກຂອງພວກເຂົາໄດ້ຮັບການອະນຸມັດ ແລະ ບ່ອນທີ່ມາດຕະການປ້ອງກັນບາງຢ່າງມີຜົນບັງຄັບໃຊ້ເພື່ອຮັບປະກັນຄວາມເປັນສ່ວນຕົວ ແລະ ການປົກປ້ອງຄຸ້ມຄອງຂໍ້ມູນ PHI ຂອງທ່ານ.

## ການນຳໃຊ້ ແລະ ການເປີດເຜີຍຂໍ້ມູນ PHI ຂອງທ່ານນັ້ນແມ່ນຈຳເປັນທີ່ຈະໄດ້ຮັບການອະນຸຍາດຈາກທ່ານເປັນລາຍລັກອັກສອນ

ພວກເຮົາຈຳເປັນຕ້ອງໄດ້ຮັບອະນຸຍາດຈາກທ່ານເປັນລາຍລັກອັກສອນໃນການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນ PHI ຂອງທ່ານໂດຍມີຂໍ້ຍົກເວັ້ນທີ່ຈຳກັດ ດ້ວຍເຫດຜົນດັ່ງຕໍ່ໄປນີ້:

- ***ການຂາຍຂໍ້ມູນ PHI*** - ພວກເຮົາຈະຂໍອະນຸຍາດຈາກທ່ານເປັນລາຍລັກອັກສອນກ່ອນທີ່ພວກເຮົາຈະເປີດເຜີຍຂໍ້ມູນທີ່ຖືວ່າເປັນການຂາຍຂໍ້ມູນ PHI ຂອງທ່ານ, ເຊິ່ງນັ້ນກໍ່ໝາຍຄວາມວ່າພວກເຮົາພວມໄດ້ຮັບຄ່າຊົດເຊີຍສຳລັບການເປີດເຜີຍຂໍ້ມູນ PHI ໃນລັກສະນະດັ່ງກ່າວນີ້.
- ***ການຕະຫຼາດ*** - ພວກເຮົາຈະຂໍອະນຸຍາດຈາກທ່ານເປັນລາຍລັກອັກສອນໃນການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນ PHI ຂອງທ່ານສຳລັບຈຸດປະສົງດ້ານການຕະຫຼາດທີ່ມີຂໍ້ຍົກເວັ້ນທີ່ຈຳກັດ, ເຊັ່ນ: ເມື່ອພວກເຮົາມີການສື່ສານດ້ານການຕະຫຼາດແບບຊ່ອງໜ້າກັບທ່ານ ຫຼື ເມື່ອພວກເຮົາໃຫ້ຂອງຂວັນສົ່ງເສີມການຂາຍທີ່ມີມູນຄ່າເລັກນ້ອຍ.
- ***ບົດບັນທຶກກ່ຽວກັບຈິດບຳບັດ*** - ພວກເຮົາຈະຂໍອະນຸຍາດຈາກທ່ານເປັນລາຍລັກອັກສອນໃນການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນການປິ່ນປົວຈິດໃຈ ຫຼື ຈິດບຳບັດຂອງທ່ານທີ່ພວກເຮົາອາດຈະມີໃນເອກະສານທີ່ມີຂໍ້ຍົກເວັ້ນທີ່ຈຳກັດເຊັ່ນ: ສຳລັບການປິ່ນປົວ, ການຈ່າຍຊຳລະເງິນ ຫຼື ໜ້າທີ່ການປະຕິບັດການດູແລຮັກສາສຸຂະພາບບາງຢ່າງ.

ທ່ານມີສິດຖອນການອະນຸຍາດຂອງທ່ານເປັນລາຍລັກອັກສອນໄດ້ທຸກເວລາ ຍົກເວັ້ນໃນຂອບເຂດທີ່ພວກເຮົາໄດ້ນຳໃຊ້ ຫຼື ເປີດເຜີຍຂໍ້ມູນ PHI ຂອງທ່ານໄປແລ້ວ ໂດຍອີງໃສ່ການອະນຸຍາດເບື້ອງຕົ້ນນັ້ນ.

## ສິດທິຂອງບຸກຄົນ

ຕໍ່ໄປນີ້ແມ່ນສິດທິຂອງທ່ານທີ່ກ່ຽວຂ້ອງກັບຂໍ້ມູນ PHI ຂອງທ່ານ. ຖ້າທ່ານຕ້ອງການໃຊ້ສິດທິໃດກໍ່ຕາມດັ່ງຕໍ່ໄປນີ້ ກະລຸນາຕິດຕໍ່ພວກເຮົາໂດຍໃຊ້ຂໍ້ມູນທີ່ຢູ່ຕອນທ້າຍຂອງແຈ້ງການສະບັບນີ້.

- ***ສິດໃນການຮ້ອງຂໍຂໍ້ຈຳກັດ*** - ທ່ານມີສິດທີ່ຈະຮ້ອງຂໍຂໍ້ຈຳກັດໃນການນຳໃຊ້ ແລະ ການເປີດເຜີຍຂໍ້ມູນ PHI ຂອງທ່ານເພື່ອການປິ່ນປົວ, ການຈ່າຍຊຳລະເງິນ ຫຼື ການປະຕິບັດການດູແລຮັກສາສຸຂະພາບ, ພ້ອມທັງການເປີດເຜີຍຕໍ່ບຸກຄົນທີ່ກ່ຽວຂ້ອງກັບການດູແລຮັກສາ ຫຼື ການຈ່າຍເງິນໃນການດູແລຮັກສາຂອງທ່ານອີກດ້ວຍ, ເຊັ່ນສະມາຊິກຄອບຄົວ ຫຼື ໝູ່ເພື່ອນໃກ້ຊິດ. ການຮ້ອງຂໍຂອງທ່ານຄວນລະບຸຂໍ້ຈຳກັດທີ່ທ່ານພວມຮ້ອງຂໍ ແລະ ລະບຸວ່າຂໍ້ຈຳກັດດັ່ງກ່າວຈະນຳໃຊ້ກັບໃຜ. ພວກເຮົາບໍ່ຈຳເປັນທີ່ຈະຕົກລົງເຫັນດີຕໍ່ກັບຄຳຮ້ອງຂໍດັ່ງກ່າວນີ້. ຖ້າພວກເຮົາຕົກລົງເຫັນດີແລ້ວ ພວກເຮົາຈະປະຕິບັດຕາມຄຳຮ້ອງຂໍການຈຳກັດຂອງທ່ານ ເວັ້ນເສຍແຕ່ວ່າຂໍ້ມູນນັ້ນໆແມ່ນມີຄວາມຈຳເປັນເພື່ອໃຫ້ການຮັກສາປິ່ນປົວສຸກເສີນແກ່ທ່ານ. ເຖິງຢ່າງໃດກໍ່ຕາມ ພວກເຮົາຈະຈຳກັດການນຳໃຊ້ ຫຼື ການເປີດເຜີຍຂໍ້ມູນ PHI ສຳລັບການຈ່າຍຊຳລະເງິນ ຫຼື ການດຳເນີນການເບິ່ງແຍດູແລສຸຂະພາບໃຫ້ສະເພາະກັບແຜນສຸຂະພາບເມື່ອທ່ານໄດ້ຈ່າຍຊຳລະຄ່າບໍລິການ ຫຼື ລາຍການດັ່ງກ່າວນັ້ນເຕັມຈຳນວນແລ້ວ.
- ***ສິດໃນການຮ້ອງຂໍການສື່ສານທີ່ຮັກສາເປັນຄວາມລັບ*** - ທ່ານມີສິດທີ່ຈະຮ້ອງຂໍໃຫ້ພວກເຮົາສື່ສານກັບທ່ານກ່ຽວກັບຂໍ້ມູນ PHI ຂອງທ່ານດ້ວຍວິທີອື່ນ ຫຼື ສະຖານທີ່ອື່ນ. ສິດທິດັ່ງກ່າວນີ້ມີຜົນສະເພາະຖ້າຂໍ້ມູນດັ່ງກ່າວອາດຈະເຮັດໃຫ້ທ່ານມີຄວາມສ່ຽງຖ້າບໍ່ໄດ້ຮັບການສື່ສານໂດຍວິທີການອື່ນ ຫຼື ສະຖານທີ່ອື່ນທີ່ທ່ານຕ້ອງການເທົ່ານັ້ນ. ທ່ານບໍ່ຈຳເປັນຕ້ອງອະທິບາຍເຫດຜົນຂອງຄຳຮ້ອງຂໍຂອງທ່ານ ແຕ່ວ່າທ່ານຕ້ອງລະບຸວ່າຂໍ້ມູນອາດຈະເປັນອັນຕະລາຍຕໍ່ທ່ານຖ້າບໍ່ມີການປ່ຽນແປງວິທີການສື່ສານ ຫຼື ສະຖານທີ່. ພວກເຮົາຈະຕ້ອງຮອງຮັບຄຳຮ້ອງຂໍຂອງທ່ານຖ້າຄຳຮ້ອງດັ່ງກ່າວມີຄວາມສົມເຫດສົມຜົນ ແລະ ກຳນົດວິທີການ ຫຼື ສະຖານທີ່ທາງເລືອກບ່ອນທີ່ຄວນສົ່ງຂໍ້ມູນ PHI ຂອງທ່ານ.
- ***ສິດໃນການເຂົ້າເຖິງ ແລະ ຮັບສຳເນົາຂໍ້ມູນ PHI ຂອງທ່ານ*** - ທ່ານມີສິດເພື່ອເບິ່ງ ຫຼື ໄດ້ຮັບສຳເນົາຂໍ້ມູນ PHI ຂອງທ່ານທີ່ມີຢູ່ໃນຊຸດບັນທຶກທີ່ກຳນົດໄວ້ ໂດຍມີຂໍ້ຍົກເວັ້ນທີ່ຈຳກັດ. ທ່ານສາມາດຮ້ອງຂໍໃຫ້ພວກເຮົາສະໜອງສຳເນົາໃນຮູບແບບອື່ນນອກເໜືອຈາກສຳເນົາເອກະສານໄດ້. ພວກເຮົາຈະນຳໃຊ້ຮູບແບບທີ່ທ່ານຮ້ອງຂໍເວັ້ນເສຍແຕ່ວ່າໃນທາງປະຕິບັດພວກເຮົາບໍ່ສາມາດດຳເນີນສິ່ງນັ້ນໆໄດ້. ທ່ານຕ້ອງເຮັດຄຳຮ້ອງຂໍເປັນລາຍລັກອັກສອນເພື່ອເຂົ້າເຖິງຂໍ້ມູນ PHI ຂອງທ່ານ. ຖ້າພວກເຮົາປະຕິເສດຄຳຮ້ອງຂໍຂອງທ່ານ ພວກເຮົາຈະໃຫ້ຄຳອະທິບາຍເປັນລາຍລັກອັກສອນແກ່ທ່ານ ແລະ ຈະບອກທ່ານເຖິງຄວາມສາມາດໃນການທົບທວນເຫດຜົນຂອງການປະຕິເສດໄດ້ຫຼືບໍ່. ພວກເຮົາຍັງຈະບອກທ່ານເຖິງວິທີການຮ້ອງຂໍໃນການທົບທວນດັ່ງກ່າວ ຫຼື ຖ້າຫາກວ່າບໍ່ສາມາດທົບທວນການປະຕິເສດນັ້ນໆໄດ້.

- ***ສິດໃນການແກ້ໄຂຂໍ້ມູນ PHI ຂອງທ່ານ*** - ທ່ານມີສິດທີ່ຈະຮ້ອງຂໍໃຫ້ພວກເຮົາແກ້ໄຂ ຫຼື ປ່ຽນແປງຂໍ້ມູນ PHI ຂອງທ່ານຖ້າທ່ານເຊື່ອວ່າມີຂໍ້ມູນທີ່ບໍ່ຖືກຕ້ອງ. ການຮ້ອງຂໍຂອງທ່ານຈະຕ້ອງເປັນລາຍລັກອັກສອນ ແລະ ຕ້ອງອະທິບາຍວ່າຍ້ອນຫຍັງຂໍ້ມູນຕ້ອງມີການແກ້ໄຂ. ພວກເຮົາອາດຈະປະຕິເສດຄຳຮ້ອງຂໍຂອງທ່ານດ້ວຍເຫດຜົນບາງຢ່າງ, ຍົກຕົວຢ່າງຖ້າພວກເຮົາບໍ່ໄດ້ສ້າງຂໍ້ມູນທີ່ທ່ານຕ້ອງການແກ້ໄຂ ແລະ ຜູ້ສ້າງ PHI ແມ່ນສາມາດດຳເນີນການປັບປຸງແກ້ໄຂໄດ້. ຖ້າພວກເຮົາປະຕິເສດຄຳຮ້ອງຂໍຂອງທ່ານ ພວກເຮົາຈະໃຫ້ຄຳອະທິບາຍເປັນລາຍລັກອັກສອນແກ່ທ່ານ. ທ່ານສາມາດຕອບກັບດ້ວຍຂໍ້ຄວາມຖະແຫຼງວ່າທ່ານບໍ່ເຫັນດີກັບການຕັດສິນໃຈຂອງພວກເຮົາ ແລະ ພວກເຮົາຈະຕິດຄັດຂໍ້ຄວາມດັ່ງກ່າວຂອງທ່ານກັບ PHI ທີ່ທ່ານຮ້ອງຂໍໃຫ້ພວກເຮົາແກ້ໄຂ. ຖ້າພວກເຮົາຮັບເອົາຄຳຮ້ອງຂໍຂອງທ່ານເພື່ອແກ້ໄຂຂໍ້ມູນນັ້ນ ພວກເຮົາຈະໃຊ້ຄວາມພະຍາຍາມທີ່ສົມເຫດສົມຜົນເພື່ອແຈ້ງໃຫ້ບຸກຄົນອື່ນ, ລວມທັງບຸກຄົນຜູ້ທີ່ທ່ານລະບຸຊື່ ໃຫ້ຮັບຊາບກ່ຽວກັບການແກ້ໄຂນັ້ນໆ ແລະ ລວມເອົາການປ່ຽນແປງນັ້ນໃນການເປີດເຜີຍຂໍ້ມູນໃດກໍ່ຕາມໃນອະນາຄົດອີກດ້ວຍ.
- ***ສິດໃນການຮັບບັນຊີລາຍງານການເປີດເຜີຍຂໍ້ມູນ*** - ທ່ານມີສິດຈະໄດ້ຮັບລາຍການຂອງກໍລະນີຕ່າງໆໃນໄລຍະ 6 ປີທີ່ຜ່ານມາທີ່ພວກເຮົາ ຫຼື ຄູ່ຮ່ວມທຸລະກິດຂອງພວກເຮົາໄດ້ເປີດເຜີຍຂໍ້ມູນ PHI ຂອງທ່ານ. ສິ່ງດັ່ງກ່າວນີ້ບໍ່ໃຊ້ກັບການເປີດເຜີຍເພື່ອຈຸດປະສົງໃນການປິ່ນປົວຮັກສາ, ການຈ່າຍຊຳລະເງິນ, ການປະຕິບັດການດູແລຮັກສາສຸຂະພາບ ຫຼື ການເປີດເຜີຍທີ່ທ່ານໄດ້ຮັບອະນຸຍາດ ແລະ ກິດຈະກຳອື່ນໆ. ຖ້າທ່ານຂໍບັນຊີລາຍງານນີ້ຫຼາຍກ່ວາໜຶ່ງ ຄັ້ງໃນໄລຍະ 12 ເດືອນ, ພວກເຮົາອາດຈະຮຽກຄ່າທຳນຽມທີ່ເໝາະສົມ ໂດຍອີງໃສ່ຄ່າໃຊ້ຈ່າຍສຳລັບການຕອບສະໜອງຕາມຄຳຮ້ອງຂໍເພີ່ມເຕີມເຫຼົ່ານີ້. ພວກເຮົາຈະໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບຄ່າທຳນຽມຂອງພວກເຮົາໃນເວລາທີ່ທ່ານຮ້ອງຂໍ.
- ***ສິດທີ່ໃນການຍື່ນຄຳຮ້ອງຮຽນ*** - ຖ້າທ່ານຮູ້ສຶກວ່າສິດທິຄວາມເປັນສ່ວນຕົວຂອງທ່ານໄດ້ຖືກລະເມີດ ຫຼື ວ່າພວກເຮົາໄດ້ລະເມີດຫຼັກປະຕິບັດຄວາມເປັນສ່ວນຕົວຂອງພວກເຮົາເອງນັ້ນ ທ່ານສາມາດຍື່ນຄຳຮ້ອງຮຽນກັບພວກເຮົາເປັນລາຍລັກອັກສອນ ຫຼື ຜ່ານທາງໂທລະສັບໂດຍໃຊ້ຂໍ້ມູນຕິດຕໍ່ທີ່ຢູ່ຕອນທ້າຍຂອງແຈ້ງການສະບັບນີ້.

  ນອກນັ້ນທ່ານຍັງສາມາດຍື່ນຄຳຮ້ອງທຸກກັບກອງເລຂາດ້ານສິດທິພົນລະເມືອງ, ກະຊວງສາທາລະນະສຸກ ແລະ ບໍລິການມະນຸດຂອງສະຫະລັດອາເມລິກາ ໂດຍການສົ່ງຈົດໝາຍໄປທີ່: 200 Independence Avenue, S.W., Washington, D.C. 20201 ຫຼືໂທ: **1-800-368-1019** (TTY: **1-800-537-7697**) ຫຼື ໂດຍການເຂົ້າເບິ່ງທີ່: **hhs.gov/ocr/privacy/hipaa/complaints**.

  **ພວກເຮົາຈະບໍ່ດຳເນີນການໃດກໍ່ຕາມທີ່ຕໍ່ຕ້ານທ່ານສຳລັບການຍື່ນຄຳຮ້ອງຮຽນ**
- ***ສິດທີ່ໃນການຮັບສຳເນົາແຈ້ງການສະບັບນີ້*** - ທ່ານສາມາດຮ້ອງຂໍສຳເນົາໃບແຈ້ງການຂອງພວກເຮົາໄດ້ທຸກເວລາໂດຍການນຳໃຊ້ຂໍ້ມູນຕິດຕໍ່ທີ່ລະບຸໄວ້ໃນຕອນທ້າຍຂອງໃບແຈ້ງການນັ້ນ. ຖ້າທ່ານໄດ້ຮັບໃບແຈ້ງການສະບັບນີ້ຈາກເວັບໄຊຂອງພວກເຮົາ ຫຼື ຜ່ານທາງຈົດໝາຍ (ອີເມວ), ທ່ານຍັງມີສິດຮ້ອງຂໍໃບສຳເນົາແຈ້ງການສະບັບທີ່ພິມໃສ່ເຈ້ຍອີກດ້ວຍ.

## ແຈ້ງການກ່ຽວກັບຄວາມເປັນສ່ວນຕົວຂອງຂໍ້ມູນດ້ານການເງິນ

ແຈ້ງການດັ່ງກ່າວນີ້ ອະທິບາຍເຖິງວິທີການທີ່ **ຂໍ້ ມູນທາງການເງິນ** ກ່ຽວກັບທ່ານສາມາດຖືກນຳໃຊ້ ແລະ ເປີດເຜີຍ, ພ້ອມກັບວິທີການທີ່ທ່ານສາມາດເຂົ້ າເຖິງຂໍ້ມູນດັ່ງກ່າວ. ກະລຸນາກວດເບິ່ງຢ່າງອຽດ.

ພວກເຮົາມີຄວາມມຸ້ງໝັ້ນທີ່ຈະຮັກສາຄວາມລັບຂອງຂໍ້ມູນດ້ານການເງິນສ່ວນບຸກຄົນຂອງທ່ານ. ສຳລັບຈຸດປະສົງຂອງແຈ້ງການສະບັບນີ້, "ຂໍ້ມູນດ້ານການເງິນສ່ວນບຸກຄົນ" ໝາຍເຖິງຂໍ້ມູນກ່ຽວກັບຜູ້ລົງທະບຽນ ຫຼື ຜູ້ສະໝັກຂໍຄວາມຄຸ້ມຄອງໃນການດູແລຮັກສາສຸຂະພາບທີ່ລະບຸເຖິງຕົວບຸກຄົນ, ເຊິ່ງໂດຍທົ່ວໄປບໍ່ສາມາດເປີດເຜີຍຕໍ່ສາທາລະນະໄດ້ ແລະ ຈະໄດ້ຮັບການເກັບກຳຈາກບຸກຄົນ ຫຼື ໄດ້ຮັບມາຈາກການເຊື່ອມໂຍງກັບການໃຫ້ຄວາມຄຸ້ມຄອງການດູແລຮັກສາສຸຂະພາບໃຫ້ແກ່ຕົວບຸກຄົນນັ້ນໆ.

**ຂໍ້ມູນທີ່ພວກເຮົາເກັບກຳ:** ພວກເຮົາເກັບກຳຂໍ້ມູນດ້ານການເງິນສ່ວນບຸກຄົນກ່ຽວກັບທ່ານຈາກແຫຼ່ງຂໍ້ມູນດັ່ງຕໍ່ໄປນີ້ຄື:

- ຂໍ້ມູນທີ່ພວກເຮົາໄດ້ຮັບຈາກທ່ານໃນໃບສະໝັກ ຫຼື ແບບຟອມຕ່າງໆ ເຊັ່ນ: ຊື່, ທີ່ຢູ່, ອາຍຸ, ຂໍ້ມູນທາງການແພດ ແລະ ໝາຍເລກປະກັນສັງຄົມ;
- ຂໍ້ມູນກ່ຽວກັບການເຮັດທຸລະກຳຂອງທ່ານກັບພວກເຮົາ, ກັບບໍລິສັດໃນເຄືອຂອງພວກເຮົາ ຫຼື ກັບບ່ອນອື່ນໆ ເຊັ່ນ: ປະຫວັດການຈ່າຍຊຳລະເງິນຄ່າເບ້ຍປະກັນ ແລະ ການອ້າງສິດ; ແລະ
- ຂໍ້ມູນຈາກການລາຍງານຂອງຜູ້ບໍລິໂພກ.

**ການເປີດເຜີຍຂໍ້ມູນ:** ພວກເຮົາຈະບໍ່ເປີດເຜີຍຂໍ້ມູນດ້ານການເງິນສ່ວນບຸກຄົນກ່ຽວກັບຜູ້ລົງທະບຽນ ຫຼື ຜູ້ລົງທະບຽນຂອງພວກເຮົາທີ່ຜ່ານມານັ້ນໃຫ້ກັບບຸກຄົນທີສາມໄດ້ຮັບຮູ້, ຍົກເວັ້ນເມື່ອງຈາກຄວາມຈຳເປັນ ຫຼື ການໄດ້ຮັບອະນຸຍາດໂດຍທາງກົດໝາຍ. ຍົກຕົວຢ່າງ, ໃນລະຫວ່າງແນວທາງການປະຕິບັດທຸລະກິດແບບທົ່ວໄປຂອງພວກເຮົາ, ພວກເຮົາອາດຈະເປີດເຜີຍຂໍ້ມູນການເງິນສ່ວນບຸກຄົນໃດໜຶ່ງທີ່ພວກເຮົາເກັບກຳມາກ່ຽວກັບທ່ານໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກທ່ານໃຫ້ແກ່ບັນດາສະຖາບັນປະເພດຕ່າງໆດັ່ງຕໍ່ໄປນີ້ໂດຍອີງຕາມທີ່ກົດໝາຍອະນຸຍາດ, ຄື:

- ໃຫ້ແກ່ບໍລິສັດໃນເຄືອຂອງພວກເຮົາ ເຊັ່ນ ບໍລິສັດປະກັນໄພອື່ນໆ;
- ຕໍ່ບໍລິສັດທີ່ບໍ່ຢູ່ໃນເຄືອນັ້ ນແມ່ນສຳລັບຈຸດປະສົງທຸລະກິດປະຈຳວັນຂອງພວກເຮົາ ເຊັ່ນ: ເພື່ອປະມວນຜົນການເຮັດທຸລະກຳຂອງທ່ານ, ຮັກສາບັນຊີຂອງທ່ານ ຫຼື ຕອບສະໜອງຕໍ່ຄຳສັ່ງຂອງສານ ແລະ ການສືບສວນທາງກົດໝາຍ; ແລະ
- ສຳລັບບໍລິສັດທີ່ບໍ່ຢູ່ໃນເຄືອທີ່ໃຫ້ບໍລິການໃຫ້ແກ່ພວກເຮົາ, ລວມທັງການສົ່ງຂໍ້ຄວາມສື່ສານໃນການສົ່ງເສີມການຂາຍໃນນາມຂອງພວກເຮົາ.

**ການຮັກສາຄວາມລັບ ແລະ ຄວາມປອດໄພ:** ພວກເຮົາຮັກສາມາດຕະການປ້ອງກັນຄວາມປອດໄພທາງດ້ານກາຍະພາບ, ທາງເອເລັກໂຕຣນິກ ແລະ ຕາມຂັ້ນຕອນ ຕາມມາດຕະຖານຂອງລັດ ແລະ ລັດຖະບານກາງທີ່ໃຊ້ໄດ້, ເພື່ອປົກປ້ອງຂໍ້ມູນດ້ານການເງິນສ່ວນບຸກຄົນຂອງທ່ານຈາກຄວາມສ່ຽງເຊັ່ນ: ການສູນເສຍ, ການທຳລາຍ ຫຼື ການໃຊ້ໃນທາງທີ່ຜິດ. ມາດຕະການເຫຼົ່ານີ້ປະກອບມີການປ້ອງກັນຄວາມປອດໄພທາງຄອມພິວເຕີ, ຟາຍ ແລະ ອາຄານທີ່ປອດໄພ, ພ້ອມທັງຂໍ້ຈຳກັດກ່ຽວກັບຜູ້ທີ່ສາມາດເຂົ້າເຖິງຂໍ້ມູນດ້ານການເງິນສ່ວນບຸກຄົນຂອງທ່ານອີກດ້ວຍ.

## ຂໍ້ມູນຕິດຕໍ່

**ຄຳຖາມກ່ຽວກັບແຈ້ງການສະບັບນີ້:** ຖ້າທ່ານມີຄຳຖາມກ່ຽວກັບແຈ້ງການສະບັບນີ້ ເຊັ່ນ ແນວທາງການປະຕິບັດຄວາມເປັນສ່ວນຕົວຂອງພວກເຮົາທີ່ກ່ຽວຂ້ອງກັບຂໍ້ມູນ PHI ຂອງທ່ານ ຫຼື ວິທີການໃຊ້ສິດທິຂອງທ່ານ, ທ່ານສາມາດຕິດຕໍ່ຫາພວກເຮົາໄດ້ໂດຍເປັນລາຍລັກອັກສອນ ຫຼື ຜ່ານທາງໂທລະສັບໂດຍການນຳໃຊ້ຂໍ້ມູນຕິດຕໍ່ທີ່ລະບຸໄວ້ຂ້າງລຸ່ມນີ້.

**Wellcare Health Plans Inc.**
**Attn: Privacy Official**
**7700 Forsyth Boulevard**
**Clayton, MO 63105**
**1-844-796-6811** (TTY: **711**)

## Race, Ethnicity and Language Information (REL)

Wellcare By Allwell promises to keep your race, ethnicity, and language (REL) information private. We use some of the following ways to protect your information:

- Keeping paper documents in locked file cabinets.
- Requiring that all electronic information stays on physically secure media.
- Maintaining your electronic information in password-protected files.

We may use or share your REL info to perform our work. These activities may include:

- Finding health care gaps.
- Making intervention programs.
- Designing and directing outreach materials.
- Telling health care professionals and doctors about your language needs.

We will never use your REL information for approving, rate setting, or benefit decisions. We will not give your REL information to unauthorized people.

H8189_WCM_162403M_C Internal Approved 08282024
NA5WCMINS62403M_WIRM 08/24

If you need these services, contact Wellcare By Allwell at **1-844-796-6811** (TTY: **711**). Between October 1 and March 31, representatives are available seven days a week, 8 a.m. to 8 p.m. Between April 1 and September 30, representatives are available Monday–Friday, 8 a.m. to 8 p.m.

**English**
Attention: If you speak English, language assistance services are available to you free of charge. Call **1-844-796-6811** (TTY: **711**).

**Español (Spanish)**
Atención: Si habla español, hay servicios de asistencia lingüística disponibles sin costo para usted. Llame al **1-844-796-6811** (TTY: **711**).

**Lus Hmoob (Hmong)**
Ua Tib Zoo Saib: Yog tias koj hais lus Hmoob, peb muaj cov kev pab cuam txhais lus uas koj tsis tas them nqi dab tsi. Hu rau **1-844-796-6811** (TTY: **711**).

**普通话 (Mandarin Chinese)**
请注意： 如果您说普通话，我们可以为您提供免费语言支持服务。请致电 **1-844-796-6811**（TTY：**711**）。

**ພາສາລາວ (Laotian)**
ຂໍ້ຄວນໃສ່ໃຈ: ຫາກວ່າທ່ານເວົ້າພາສາລາວ, ພວກເຮົາມີການບໍລິການຊ່ວຍເຫຼືອດ້ານພາສາໃຫ້ທ່ານໂດຍບໍ່ເສຍຄ່າ. ໂທຫາ **1-844-796-6811** (TTY: **711**).

**မြန်မာဘာသာ (Burmese)**
သတိပြုရန်- သင်သည် မြန်မာစကားပြောဆိုပါက၊ ဘာသာစကားအကူအညီ ဝန်ဆောင်မှုများကို အခမဲ့ရယူနိုင်သည်။ **1-844-796-6811** (TTY: **711**) သို့ ဖုန်းခေါ်ဆိုပါ။

**Somali (Somali)**
Fiiro gaar ah: Hadii aad ku hadasho Soomaali, adeegyada kaalmada luuqada ayaad heleysaa oo kuu bilaash ah. La hadal **1-844-796-6811** (TTY: **711**).

**Русский (Russian)**
Внимание: если вы говорите на русском языке, вы можете бесплатно получить помощь переводчика. Позвоните по номеру **1-844-796-6811** (TTY: **711**).

**Hrvatski (Croatian)**
Pažnja: ako govorite hrvatski, usluge jezične pomoći dostupne su vam besplatno. Nazovite **1-844-796-6811** (TTY: **711**).

**German (German)**
Achtung: Wenn Sie Deutsch sprechen, stehen Ihnen kostenlos Sprachdienstleistungen zur Verfügung. Rufen Sie dazu folgende Nummer an: **1-844-796-6811** (TTY: **711**).

**العربية (Arabic)**
انتباه: في حال كنت تتحدث اللغة العربية، تتوفر لك خدمات مساعدة لغوية مجانية. اتصل على الرقم **1-844-796-6811** (TTY: **711**).

**Tiếng Việt (Vietnamese)**
Lưu ý: Nếu quý vị nói tiếng Việt, chúng tôi có dịch vụ hỗ trợ ngôn ngữ miễn phí cho quý vị. Gọi số **1-844-796-6811** (TTY: **711**).

**한국어 (Korean)**
주의: 한국어를 구사할 경우, 언어 보조 서비스를 무료로 이용 가능합니다. **1-844-796-6811** (TTY: **711**)번으로 전화해 주십시오.

**Deitsch (Pennsylvania Dutch)**
Wichdich: Wann du Deitsch schwetzscht, kannscht du en Interpreter griege unni as es ennich eppes koschte zellt. Ruf **1-844-796-6811** (TTY: **711**) uff.

**Polski (Polish)**
Uwaga: Jeśli mówisz po polsku, możesz skorzystać z bezpłatnej pomocy językowej. Zadzwoń pod numer **1-844-796-6811** (TTY: **711**).

**हिंदी (Hindi)**
ध्यान दें: यदि आप हिंदी बोलते हैं, तो भाषा सहायता सेवाएं आपके लिए निःशुल्क उपलब्ध हैं. **1-844-796-6811** (TTY: **711**) पर कॉल करें.

**Shqip (Albanian)**
Vëmendje: Nëse flisni shqip, shërbimet e asistencës gjuhësore ju vihen në dispozicion falas. Telefononi **1-844-796-6811** (TTY: **711**).